# ຄວາມຄືບໜ້າ ການກະກຽມຫລຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ຂອງ ສປປ ລາວ ແລະ ຜົນການເຂົ້າຮ່ວມກອງປະຊຸມສຸດຍອດວ່າດ້ວຍອະນາຄົດ ທີ່ນິວຢອກ

ໂດຍ: ທ່ານ ໂພໄຊ ໄຂຄຳພິທູນ
ຮອງລັດຖະມົນຕີກະຊວງການຕ່າງປະເທດ

**ກອງປະຊຸມໂຕະມົນປະຈຳປີ 2024**
**14 ພະຈິກ 2024**

# ສາລະບານ


01 ຄວາມຄືບໜ້າ ການກະກຽມຫລຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ຂອງ ສປປ ລາວ

02 ຜົນການເຂົ້າຮ່ວມກອງປະຊຸມສຸດຍອດອານາຄົດ ທີ່ນິວຢອກ

01

# ຄວາມຄືບໜ້າ ການກະກຽມຫລຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ຂອງ ສປປ ລາວ

# ພາບລວມບັນດາປະເທດດ້ອຍພັດທະນາ

- ປັດຈຸບັນມີ ປະເທດດ້ອຍພັດທະນາ 45 ປະເທດ
- ປະຊາກອນປະມານ: 880 ລ້ານຄົນ
- ປະມານ 75% ຍັງຢູ່ໃນຄວາມທຸກຍາກ
- 7 ປະເທດຫຼຸດພົ້ນອອກຈາກສະຖານະພາບ LDC






# ແຜນດຳເນີນງານ ສປຊ ສຳລັບປະເທດດ້ອຍພັດທະນາ






# ສປປ ລາວ: ການປະເມີນອອກຈາກສະຖານະພາບປະເທດດ້ອຍພັດທະນາໃນໄລຍະທີ່ຜ່ານມາ

Table 2. Indicators for LDC Identification, Lao PDR, 2020-2024.

| | HAI | EVI | GNI per capita |
|---|---|---|---|
| 2020 | 71.8 | 29.8 | 2,268 |
| 2021 | 72.6 | 29.8 | 2,408 |
| 2022 | 73.7 | 29.7 | 2,511 |
| 2023 | 74.2 | 29.5 | 2,550 |
| 2024 | 74.8 | 29.8 | 2,503 |

Human assets index (HAI)*




Economic and environmental vulnerability index (EVI)*




Gross national income (GNI) per capita*



# ຄຳແນະນຳຂອງຄະນະກຳມະການດ້ານນະໂຍບາຍການພັດທະນາ (CDP)

1. ການຫຼຸດຜ່ອນ ໜີ້ສິນ ແລະ ປັບປຸງເສດຖະກິດມະຫາພາກໃຫ້ມີສະຖຽນລະພາບຍິ່ງຂຶ້ນ;
2. ການຫັນປ່ຽນດ້ານໂຄງສ້າງ ແບບກວມລວມ ແລະ ຍືນຍົງ, ເສດຖະກິດທີ່ມີຄວາມຫຼາກຫຼາຍ, ແລະ ການເຊື່ອມໂຍງພາກພື້ນ;
3. ຫຼຸດຜ່ອນຄວາມບໍ່ສະເໝີພາບ ລະຫວ່າງ ຊົນນະບົດ ແລະ ຕົວເມືອງ;
4. ສ້າງຄວາມທົນທານຕໍ່ ໄພພິບັດ ແລະ ຟື້ນຟູການເສື່ອມໂຊມຂອງສິ່ງແວດລ້ອມ.

# ຜົນກະທົບ ແລະ ສິ່ງທ້າທາຍ

## ດ້ານການຄ້າ

- ການສູນເສຍບັນດາສິດທິພິເສດທາງການຄ້າ;
- ການສູນເສຍ ຫຼື ຫຼຸດລົງ ໃນການໄດ້ຮັບການປະຕິບັດແບບພິເສດ ແລະ ແຕກຕ່າງ ໃນຂອບ ອົງການການຄ້າໂລກ.



## ດ້ານການຊ່ວຍເຫຼືອ ເພື່ອການພັດທະນາ

- ເງື່ອນໄຂ ແລະ ຂໍ້ກຳນົດ ໃນການເຂົ້າເຖິງແຫຼ່ງທຶນກູ້ຢືມ;
- ຂໍ້ຈຳກັດສຳລັບ ການເຂົ້າເຖິງກອງທຶນສາກົນ ເພື່ອການພັດທະນາ ແລະ ສິ່ງແວດລ້ອມ.



## ດ້ານປັນອ້ອມອື່ນໆ

- ການເພີ່ມຂຶ້ນຂອງການຈ່າຍເງິນພັນທະປະກອບສ່ວນ;
- ການຫຼຸດລົງຂອງ ການສະໜັບສະໜູນທຶນໃຫ້ເຂົ້າຮ່ວມກອງປະຊຸມສາກົນ.



# ທິດທາງຕໍ່ໜ້າ (1)

1. **ເຜີຍແຜ່ ແລະ ສ້າງຄວາມຮັບຮູ້ ແລະ ເຂົ້າໃຈ** ກ່ຽວກັບ ຂະບວນການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາຂອງ ສປປ ລາວ.
2. **ຂົນຂວາຍການສະໜັບສະໜູນ ແລະ ການຊ່ວຍເຫຼືອທາງການຈາກສາກົນ, ລວມເຖິງ ການເຂົ້າເຖິງ ມາດຕະການສະໜັບສະໜູນສາກົນ (ISM)** ສໍາລັບການສະໜອງທຶນເພື່ອການພັດທະນາ, ຂະແໜງສັງຄົມ, ການອໍານວຍຄວາມສະດວກດ້ານການຄ້າ, ການປ່ຽນແປງດິນຟ້າອາກາດ, ການຫັນເປັນດິຈິຕອນ, ການພັດທະນາພື້ນຖານໂຄງລ່າງ.
3. **ປະສານສົມທົບກັບ ອົງການເຄືອຂ່າຍ ສປຊ ແລະ ຄູ່ຮ່ວມພັດທະນາ** ເພື່ອຕິດຕາມຢ່າງໃກ້ຊິດ ກ່ຽວກັບ ສະພາບການພັດທະນາຂອງປະເທດ ໂດຍຜ່ານກົນໄກການຕິດຕາມຂອງ ສປຊ.
4. **ເລີ່ມ ແລະ ເລັ່ງການຈັດຕັ້ງປະຕິບັດ ແລະ ຕິດຕາມ-ປະເມີນຜົນ** STS.
5. **ຕິດຕາມຢ່າງໃກ້ຊິດສະພາບພາຍໃນ ແລະ ພາຍນອກ ແລະ ປະເມີນຄວາມພ້ອມຂອງ ສປປ ລາວ ໃນສູມປີຕໍ່ໜ້າ,** ໂດຍສະເພາະຮັບປະກັນການຕິດຕາມ ແລະ ປະເມີນດ້ວຍຂໍ້ມູນທີ່ແນ່ນອນ ແລະ ຈາກແຫຼ່ງທີ່ເຊື່ອຖືໄດ້.



# ທິດທາງຕໍ່ໜ້າ (2)

- ສຳລັບ ສປປ ລາວ, ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາຢ່າງໂລ່ງລ່ຽນ, ມີຄຸນນະພາບ ແລະ ຍືນຍົງ ແມ່ນຄາດໝາຍສູ້ຊົນໄລຍະຍາວຂອງພັກ ແລະ ລັດຖະບານ, ແລະ ການຜ່ານເກນການປະເມີນການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາໃນໄລຍະທີ່ຜ່ານມາສະແດງເຖິງຄວາມໝາຍໝັ້ນອັນໜັກແໜ້ນ ແລະ ຕັ້ງໜ້າຂອງ ສປປ ລາວ ໃນການຈັດຕັ້ງຜັນຂະຫຍາຍວາລະສາກົນ.
- ເຖິງຢ່າງໃດກໍ່ຕາມ, ການທີ່ ສປປ ລາວ ສາມາດຜ່ານເກນການປະເມີນເພື່ອຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ກໍ່ບໍ່ໄດ້ໝາຍຄວາມວ່າ *ພາລະກິດໃນການລຶບລ້າງຄວາມທຸກຍາກຈະສິ້ນສຸດລົງ ແລະ ກໍ່ບໍ່ໄດ້ໝາຍຄວາມວ່າທຸກຄົນໃນຊາດຈະຮັ່ງມີຂຶ້ນໃນທັນທີທັນໃດ, ແຕ່ຫາກເປັນການສ່ອງແສງໃຫ້ເຫັນເຖິງຜົນສຳເລັດ ແລະ ຂີດໝາຍທີ່ສຳຄັນຍິ່ງໃນຂະບວນການພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາ ພາຍໃຕ້ການນຳພາຊີ້ນຳຂອງ ພັກ ແລະ ລັດຖະບານແຫ່ງ ສປປ ລາວ.*

# 02

# ຜົນການເຂົ້າຮ່ວມກອງປະຊຸມສຸດຍອດ ອະນາຄົດ ທີ່ນິວຢອກ

# ພາບລວມຂອງກອງປະຊຸມ

- ທ່ານ ສະເຫຼີມໄຊ ກົມມະສິດ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ໄດ້ນໍາພາ ຄະນະຜູ້ແທນທາງການລາວເຂົ້າຮ່ວມ.
- ຫົວຂໍ້: “ວິທີທາງແກ້ໄຂບັນຫາແບບຫຼາຍຝ່າຍ ເພື່ອອະນາຄົດທີ່ດີກວ່າເກົ່າ”, ພາຍໃຕ້ການເປັນປະທານຂອງ ທ່ານ ຟີເລມອນ ຢາງ, ປະທານສະມັດຊາໃຫຍ່ອົງການ ສະຫະປະຊາຊາດ ສະໄໝທີ 79
- ມີບັນດາປະມຸກລັດຈາກ 73 ປະເທດ, ຫົວໜ້າລັດຖະບານ 51 ປະເທດ, ຮອງນາຍົກລັດຖະມົນຕີ, ບັນດາທ່ານລັດຖະມົນຕີ, ຜູ້ຕາງໜ້າຖາວອນ ປະຈໍາ ອົງການ ສປຊ, ປະເທດສະມາຊິກ ອົງການ ສປຊ ຈໍານວນ 193 ປະເທດ

# ຈຸດປະສົງຂອງກອງປະຊຸມ

1. ເລັ່ງລັດຄວາມພະຍະຍາມ ໃນການບັນລຸຄວາມໝາຍໝັ້ນຂອງສາກົນ ກໍຄື: ເປົ້າໝາຍການພັດທະນາແບບຍືນຍົງ ແລະ ສົນທິສັນຍາປາຣີ ວ່າດ້ວຍການປ່ຽນແປງດິນຟ້າອາກາດ,
2. ເພື່ອຕອບໂຕ້ກັບບັນດາສິ່ງທ້າທາຍ ແລະ ນໍາໃຊ້ ກາລະໂອກາດຕ່າງໆ ທີ່ພວມເກີດຂຶ້ນ ແລະ
3. ເພື່ອຮັບຮອງເອົາຂໍ້ຕົກລົງສາກົນວ່າດ້ວຍອະນາຄົດ ແລະ ເອກະສານຊ້ອນທ້າຍ 2 ສະບັບ, ເຊິ່ງປະກອບມີ:
    1. ຂໍ້ຕົກລົງດ້ານດິຈິຕອນຂອງສາກົນ; ແລະ
    2. ຖະແຫຼງການວ່າດ້ວຍ ຄົນຮຸ້ນຕໍ່ໄປ.

# ເນື້ອໃນເອກະສານໂດຍສັງເຂບ (1)

- **ຂໍ້ຕົກລົງວ່າດ້ວຍອະນາຄົດ (Pact for the future)** ສຸມໃສ່ 5 ບັນຫາສຳຄັນຂອງໂລກ ຄື:

1. ການເລັ່ງລັດການຈັດຕັ້ງປະຕິບັດ ປພຍ ໂດຍການປະຕິຮູບລະບົບການເງິນ,
2. ຮັກສາສັນຕິພາບ ແລະ ຄວາມໝັ້ນຄົງສາກົນ,
3. ຊຸກຍູ້ການພັດທະນາໃນຂະແໜງການ ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາ ໄປຄຽງຄູ່ກັບການຮ່ວມມືທາງດ້ານດິຈິຕອນ,
4. ປົກປັກຮັກສາຜົນປະໂຫຍດຂອງຄົນຮຸ່ນຕໍ່ໄປ, ແລະ
5. ດໍາເນີນການປະຕິຮູບລະບົບການປົກຄອງສາກົນທີ່ມີຄວາມຈໍາເປັນ.

# ເນື້ອໃນເອກະສານໂດຍສັງເຂບ (2)

**ເອກະສານຊ້ອນທ້າຍ 2 ສະບັບ:**

- **ຂໍ້ຕົກລົງດ້ານດິຈິຕອນຂອງສາກົນ (Global Digital Compact):**

ການຄຸ້ມຄອງບໍລິຫານ ປັນຍາປະດິດ (AI) ແລະ ເຕັກໂນໂລຊີ ດິຈິຕອນ ແນໃສ່ ຮັດແຄບຊ່ອງວ່າງດ້ານດິຈິຕອນ ແລະ ຮັບປະກັນການນຳໃຊ້ ປັນຍາປະດິດ (ດ້ວຍຄວາມປອດໄພ).

- **ຖະແຫຼງການວ່າດ້ວຍ ຄົນຮຸ້ນຕໍ່ໄປ (Declaration on Future Generations):** ເນັ້ນໃສ່ຄວາມຕ້ອງການ ແລະ ຜົນປະໂຫຍດ ໃນໄລຍະຍາວ ຂອງ ຄົນຮຸ່ນຕໍ່ໆໄປໃນອະນາຄົດ ເຂົ້າໃນການຕັດສິນບັນຫາຂອງສາກົນ ໂດຍສະເພາະການປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມສະເໝີພາບ.

# ການປະກອບສ່ວນຂອງຄະນະຜູ້ແທນລາວ

1. **ໃນກອງປະຊຸມຄົບຄະນະ ຂອງວັນທີ 22 ກັນຍາ**, ທ່ານ ຮອງນາຍົກລັດຖະມົນຕີ ໄດ້ກ່າວປາໄສ ໂດຍໄດ້ສະແດງຄວາມເຫັນດີຕໍ່ການຮັບຮອງຂໍ້ຕົກລົງວ່າດ້ວຍອະນາຄົດ ແລະ ເອກະສານຊ້ອນທ້າຍທັງສອງສະບັບ
2. **ໃນວັນທີ 23 ກັນຍາ**, ທ່ານ ຮອງນາຍົກລັດຖະມົນຕີ, ກໍໄດ້ປະກອບຄໍາເຫັນໃນພາກສົນທະນາ ພາຍໃຕ້ຫົວຂໍ້ທີ 3: "ກ້າວໄປສູ່ອະນາຄົດດ້ານດິຈິຕອນ ຮ່ວມກັນ: ຮັດແໜ້ນການຮ່ວມມື ແລະ ນະວັດຕະກໍາ ທີ່ກວມລວມ ເພື່ອຮັດແຄບຊ່ອງຫວ່າງທາງດ້ານດິຈິຕອນ"

# ທິດທາງຕໍ່ໜ້າ

- ແຈ້ງການຂອງ ຫສນຍ, ສະບັບເລກທີ: 2304/ຫສນຍ, ລົງວັນທີ 06 ພະຈິກ 2024, ວ່າດ້ວຍ ທິດຊີ້ນຳ ກ່ຽວກັບ ຜົນການຕ້ອນຮັບ ທ່ານ ເລຂາທິການໃຫຍ່ອົງການ ສປຊ ແລະ ຜົນກອງປະຊຸມສະມັດຊາໃຫຍ່ ອົງການ ສປຊ ຄັ້ງທີ 79, ກອງປະຊຸມສຸດຍອດວ່າດ້ວຍອະນາຄົດ ແລະ ກອງປະຊຸມປິ່ນອ້ອມລະດັບສູງອື່ນໆ.
- **<u>ພາກລັດ:</u>**

1) ປະສານກັບ ຫ້ອງການຜູ້ປະສານງານອົງການ ສປຊ ປະຈຳ ສປປ ລາວ ເພື່ອ ສ້າງຕັ້ງຄະນະເຮັດວຽກ ສະໜັບສະໜູນ ການຫຼຸດພົ້ນອອກ ຈາກສະຖານະພາບ LDC.
2) ສຳສິ່ງເນື້ອໃນຈິດໃຈ ແລະ ຜົນຂອງກອງປະຊຸມໃນປີນີ້ ໃຫ້ບັນດາກະຊວງຂະແໜງການ ເພື່ອພິຈາລະນາ ເຂົ້າໃນ ແຜນການໃນປະຈຸບັນ ແລະ ອະນາຄົດ ເພື່ອພ້ອມກັນຈັດຕັ້ງຜັນຂະຫຍາຍໃຫ້ປະກົດຜົນເປັນຈິງ.

- **<u>ຕໍ່ສາກົນ:</u>** ສະເໜີຂໍການສະໜັບສະໜູນ ຈາກຄູ່ຮ່ວມພັດທະນາ ກໍ່ຄື ລະບົບອົງການເຄືອຂ່າຍ ຂອງ ສະຫະປະຊາດ ໃນການຈັດຕັ້ງປະຕິບັດ ແລະ ບັນລຸຕາມຄວາມໝາຍໝັ້ນດັ່ງກ່າວໄດ້;

# Thank You